ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 942/ຈຂ.ອປ
ອັດຕະປື, ວັນທີ 15.9.2016

# ຄໍາແນະນໍາ

**ເຖິງ:** ບັນດາທ່ານຫົວໜ້າພະແນກການ, ອົງການລັດທຽບເທົ່າ, ກອງບັນຊາການ ປກຊ, ກອງບັນຊາການປກສ ແຂວງ ແລະ ບັນດາເຈົ້າເມືອງ.

**ເລື່ອງ:** ໃຫ້ເອົາໃຈໃສ່ໂຄສະນາເຜີຍແຜ່, ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແລະ ນິຕິກຳຕ່າງໆ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີເລກທີ 38/ນຍ, ລົງວັນທີ 17 ຕຸລາ 2007 ກ່ຽວກັບການເອົາໃຈໃສ່ໂຄສະນາເຜີຍແຜ່ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ.

ນັບແຕ່ປີ 1990 ມາຮອດປັດຈຸບັນ ລັດພວກເຮົາກໍ່ໄດ້ຫັນເອົາແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກມາເປັນລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆ ເປັນຈຳນວນຫຼວງຫຼາຍ ເພື່ອເປັນເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດສັງຄົມ ແຕ່ແນວທາງ, ແຜນນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຂອງລັດເຖິງວ່າຈະດີ, ຈະຖືກຕ້ອງສອດຄ່ອງປານໃດກໍ່ຕາມ ກໍ່ຈະເປັນເອກະສານທີ່ບໍ່ມີຄຸນຄ່າ, ບໍ່ມີຄວາມໝາຍຫຍັງ ຖ້າວ່າເອກະສານເຫຼົ່ານັ້ນ ຫາກບໍ່ຖືກນຳມາເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ; ສະນັ້ນ, ການໂຄສະນາເຜີຍແຜ່, ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແລະ ນິຕິກາຕ່າງໆ ຈຶ່ງເປັນຄວາມຮຽກຮ້ອງຕ້ອງການພາວະວິໄສໃນປັດຈຸບັນ.

ໃນໄລຍະຜ່ານມາການໂຄສະນາເຜີຍແຜ່, ສຶກສາອົບຮົມ, ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳຕ່າງໆແມ່ນໄດ້ຮັບການເອົາໃຈໃສ່ຈາກພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ ແລະ ບັນດາເມືອງດີສົມຄວນ ໂດຍສະເພາະແມ່ນຂະແໜງຍຸຕິທຳ ທີ່ເຮັດພາລະບົດບາດເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ ແລະເມືອງຈຶ່ງເຮັດໃຫ້ຄວາມຮັບຮູ້ເຂົ້າໃຈຂອງພະນັກງານ, ທະຫານ, ຕຳຫຼວດ ກໍ່ຄືປະຊາຊົນບັນດາເຜົ່າ ກ່ຽວກັບກົດໝາຍ ແລະ ນິຕິກຳຕ່າງໆກໍ່ນັບມື້ນັບດີຂຶ້ນ, ສະຕິເຄົາລົບກົດໝາຍໄດ້ຮັບການເຊີດຊູໃຫ້ສູງຂຶ້ນເປັນກ້າວໆ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ. ແຕ່ຄຽງຄູ່ກັນນັ້ນ, ກໍ່ສັງເກດເຫັນວ່າຍັງມີຫຼາຍພະແນກການ, ອົງການ ແລະ ເມືອງ ຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນໃນການຫັນເອົາວຽກງານນີ້ເປັນໜ້າທີ່ການເມືອງຂອງຕົນ, ມີແຕ່ເອື້ອອີງ

ໃສ່ພາກສ່ວນອື່ນເຮັດການໂຄສະນາເຜີຍແຜ່ ແລະສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍແທນຂະແໜງການຕົນ, ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ການເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍໃຫ້ແກ່ສັງຄົມຍັງບໍ່ທັນເປັນຂະບວນຟົດຟື້ນ, ບໍ່ຕໍ່ເນື່ອງ, ບໍ່ທົ່ວເຖິງ ແລະ ບໍ່ທັນລົງເລິກໃສ່ເປົ້າໝາຍ ຊຶ່ງເປັນສາເຫດສຳຄັນທີ່ພາໃຫ້ມີການລະເມີດກົດໝາຍເກີດຂຶ້ນ.

ສະນັ້ນ, ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຄຳສັ່ງເລກທີ 38/ນຍ, ລົງວັນທີ 17 ຕຸລາ 2007 ຂອງນາຍົກລັດຖະມົນຕີ, ທັງເປັນຄວາມຮັບຜິດຊອບຂອງຂະແໜງການ ແລະ ທ້ອງຖິ່ນ ຕໍ່ການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ນິຕິກຳຕ່າງໆ ໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃຫ້ມີສະຕິເຄົາລົບກົດໝາຍ.

**ເຈົ້າແຂວງອອກຄຳແນະນຳ ດັ່ງນີ້:**

1. ໃຫ້ບັນດາພະແນກການ, ອົງການລັດທັງຮູບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ ແລະ ປກສ ແຂວງ ເປັນເຈົ້າການໂຄສະນາເຜີຍແຜ່, ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງການຕົນ ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ ແລະ ປະຊາຊົນບັນດາເຜົ່າຮັບຮູ້ເຂົ້າໃຈກົດໝາຍຕ່າງໆຢ່າງເລິກເຊິ່ງ, ເປັນແບບຢ່າງໃນການເຄົາລົບ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບກັນ ພ້ອມທັງຕີລາຄາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳດັ່ງກ່າວ; ໃຫ້ພາກສ່ວນທີ່ມີໜ້າທີ່ກວດກາການຈັດຕັ້ງປະຕິບັດກົດໝາຍເອົາໃຈໃສ່ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳຕ່າງໆຢ່າງແຂງແຮງກວ່າເກົ່າ. ສຳລັບຂັ້ນເມືອງແມ່ນຖືເອົາຫ້ອງການຍຸຕິທຳເມືອງ ເປັນຜູ້ຮັບຜິດຊອບໂດຍກົງຊ່ວຍອົງການປົກຄອງເມືອງ ໃນການໂຄສະນາສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແລະ ນິຕິກຳຕ່າງໆ, ພ້ອມທັງຕີລາຄາການ ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃນເມືອງຂອງຕົນ.

2. ເນື້ອໃນການໂຄສະນາເຜີຍແຜ່ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແລະ ນິຕິກຳ ແມ່ນໃຫ້ສົມທົບການໂຄສະນາກົດໝາຍກັບແນວທາງ, ນະໂຍບາຍ, ມະຕິຂອງພັກ ແລະ ຮີດຄອງປະເພນີອັນດີງາມຂອງເຜົ່າຕ່າງໆ.

3. ອີງໃສ່ສະພາບຈຸດພິເສດຂອງແຕ່ລະຂະແໜງການ, ແຕ່ລະເມືອງ ເພື່ອໃຊ້ຮູບການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳຫຼາຍຮູບຫຼາຍແບບທີ່ເໝາະສົມກັບແຕ່ລະເປົ້າໝາຍ ເຊັ່ນ: ການໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍໂດຍກົງ (ທາງປາກເປົ່າ) ຕາມບ້ານ, ພະແນກການ, ອົງການ, ໂຮງຮຽນ, ໂຮງຈັກ, ໂຮງງານ; ການຈັດຕັ້ງການຮຽນ-ການສອນ, ການຝຶກອົບຮົມໄລຍະສັ້ນ, ການໂຄສະນາເຜີຍແຜ່ທາງສື່ມວນຊົນ ເຊັ່ນ: ໂທລະພາບ, ວິທະຍຸ, ໂທລະໂຄ່ງ ແລະ ອື່ນໆ; ໂຄສະນາດ້ວຍການໃຫ້ຄຳປຶກສາທາງດ້ານກົດໝາຍໂດຍບໍ່ເສຍຄ່າ, ໂຄສະນາໂດຍຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆ, ນຳເອົາກົດໝາຍເຂົ້າໃນຫຼັກສູດການສອນຢູ່ໂຮງຮຽນຊັ້ນຕ່າງໆ; ນອກຈາກນັ້ນ, ຍັງສາມາດເຜີຍແຜ່, ສຶກສາອົບຮົມກົດໝາຍດ້ວຍການສະແດງລະຄອນ, ຈັດຕັ້ງສົນທະນາແບບຖາມ-ຕອບ ແລະ ອື່ນໆ ທີ່ມີເນື້ອໃນພົວພັນເຖິງການສຶກສາອົບຮົມ ຫຼື ການຈັດຕັ້ງປະຕິບັດກົດໝາຍ.

4. ໃຫ້ບັນດາພະແນກການ, ອົງການລັດຂັ້ນແຂວງ, ເມືອງ ແລະ ບ້ານ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່, ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແລະ ນິຕິກຳ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີຜົນສຳເລັດຕາມລະດັບຄາດໝາຍ.

5. ບັນດາຫົວໜ້າພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ, ປກສ ແຂວງ, ບັນດາເຈົ້າເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ຄຳແນະນຳສະບັບນີ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນສູງ.

6. ຜ່ານການຈັດຕັ້ງປະຕິບັດໄດ້ຮັບຜົນ ຫຼື ພົບຂໍ້ຫຍຸ້ງຍາກແນວໃດນັ້ນ ໃຫ້ພາກສ່ວນທີ່ກ່ຽວຂ້ອງປະສານສົມທົບກັບພະແນກຍຸຕິທຳແຂວງ ສັງລວມລາຍງານໃຫ້ທ່ານເຈົ້າແຂວງຊາບ ແລະ ເພື່ອຊີ້ນຳ.

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຕ/ າ ເຈົ້າແຂວງ

ບ່ອນນຳສົ່ງ:

1. ເຈົ້າແຂວງ, ຮອງເຈົ້າແຂວງຜູ້ລະ 01 ສະບັບ
2. ພະແນກການ, ອົງການລັດທຽບເທົ່າ 01 ສະບັບ
3. ກອງບັນຊາການ ປກສ, ປກຊ ແຂວງ 01 ສະບັບ
4. ເຈົ້າເມືອງ 5 ເມືອງ 01 ສະບັບ
5. ເກັບຮັກສາໄວ້ 01 ສະບັບ

ພອນສະໃໝ ມຽງລາວັນ